ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຊາວໜຸ່ມ ທຫລ ຮັບທຸງໄຊນຳໜ້າ ຂະບວນການຊາວໜຸ່ມ 4 ບຸກ




ໃນວັນທີ 17 ມີນາ 2020 ທີ່ຫ້ອງປະຊຸມທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງພິທີມອບ-ຮັບ ທຸງໄຊນຳໜ້າ ຂະບວນການແຂ່ງຂັນ 4 ບຸກຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ (ຊປປລ) ທຫລ ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍນາງ ວັດທະນາ ດາລາລອຍ ກຳມະການປະຈຳພັກ-ຮອງຜູ້ວ່າການ ທຫລ; ສະຫາຍນາງ ວິລະວອນ ພັນທະວົງ ຮອງເລຂາຄະນະບໍລິຫານງານສູນກາງ ຊປປລ; ສະຫາຍ ປອ.ອາຄົມ ປຣະເສີດ ເລຂາຄະນະບໍລິຫານງານຊາວໜຸ່ມ ທຫລ; ພ້ອມນີ້, ກໍ່ມີຜູ້ຕາງໜ້າຄະນະບໍລິຫານງານຊາວໜຸ່ມ ກະຊວງຕ່າງໆ; ຕາງໜ້າອົງການຈັດຕັ້ງມະຫາຊົນ ທຫລ-ບັນດາຄະນະຊາວໜຸ່ມຮາກຖານທີ່ຂຶ້ນກັບຄະນະບໍລິຫານງານຊາວໜຸ່ມ ທຫລ ແລະ ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມ.

ຜ່ານການຈັດຕັ້ງປະຕິບັດ ແລະ ປະເມີນການກວດກາ 4 ບຸກ ໃນປີ 2018 ຜ່ານມາ; ຄະນະບໍລິຫານງານຊາວໜຸ່ມ ທຫລ ສາມາດຍາດໄດ້ຜົນງານເດັ່ນໃນການບຸກດ້ານແນວຄິດ; ບຸກດ້ານການຝຶກຝົນຫຼໍ່ຫຼອມ-ຮໍ່າຮຽນ; ບຸກດ້ານການປັບປຸງ-ກໍ່ສ້າງການຈັດຕັ້ງ ແລະ ບຸກວຽກງານວິຊາສະເພາະ (ບຸກດ້ານຝຶກອົບຮົມວິຊາຊີບ-ສ້າງວຽກເຮັດງານທຳ) ໂດຍອີງຕາມຜົນງານການເຄື່ອນໄຫວຕົວຈິງ ສົມທຽບໃສ່ມາດຖານ ແລະ ເງື່ອນໄຂຂໍ້ແຂ່ງຂັນ 4 ບຸກ ສາມາດຈັດປະເພດໄດ້ ຄື: ສະມາຊິກທີ່ມີເງື່ອນໄຂສາມາດປະເມີນຜົນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກມີທັງໝົດ 2.189 ສະຫາຍ ສາມາດຈັດປະເພດແຂງໄດ້ 2.071 ສະຫາຍ ກວມເອົາ 94,61%; ກາງ 115 ສະຫາຍ ກວມເອົາ 5,25% ແລະ ປະເພດອ່ອນ 3 ສະຫາຍ ກວມເອົາ 0,14%. ມີໜ່ວຍຊາວໜຸ່ມທັງໝົດ 127 ໜ່ວຍ ສາມາດຈັດປະເພດ 4 ບຸກໄດ້ 123 ໜ່ວຍ ກວມເອົາ 96,85%. ມີຮາກຖານຊາວໜຸ່ມທັງໝົດ 8 ຮາກຖານສາມາດຈັດປະເພດ 4 ບຸກໄດ້ 7 ຮາກຖານກວມເອົາ 97,50%.





ສະຫາຍ ຮອງຜູ້ວ່າການ ທຫລ ແລະ ສະຫາຍ ຮອງເລຂາຄະນະບໍລິຫານງານ ສູນກາງ ຊປປລ ໄດ້ຜັດປ່ຽນກັນມີ ຄໍາເຫັນ ໂດຍໄດ້ສະແດງຄວາມຍ້ອງຍໍ-ຊົມເຊີຍຕໍ່ຄະນະບໍລິຫານງານຊາວໜຸ່ມ ທຫລ ທີ່ສາມາດຍາດໄດ້ຜົນງານພົ້ນເດັ່ນໃນຫຼາຍດ້ານ ໃນນີ້ແມ່ນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກຂອງສູນກາງ ຊປປລ ຈົນໄດ້ຮັບນາມມະຍົດເປັນຄະນະຊາວໜຸ່ມ 4 ບຸກ 3 ປີຊ້ອນຕໍ່ເນື່ອງກັນ ສາມາດຍາດໄດ້ທຸງໄຊນໍາໜ້າ ແລະ ເນັ້ນໃຫ້ສືບຕໍ່ຈັດຕັ້ງປະຕິບັດວຽກງານວິຊາສະເພາະໃຫ້ໄດ້ຮັບຜົນສໍາເລັດເປັນກ້າວໆ; ສືບຕໍ່ປັບປຸງການຈັດຕັ້ງຊາວໜຸ່ມແຕ່ລະຂັ້ນ ໃຫ້ເຕີບໃຫຍ່-ເຂັ້ມແຂງທາງດ້ານປະລິມານ ແລະ ຄຸນນະພາບ ແນໃສ່ເປັນກໍາລັງແຮງຕົ້ນຕໍຊ່ວຍຄະນະນໍາແຕ່ລະຂັ້ນໃນການເຕົ້າໂຮມຄວາມສາມັກຄີ ແລະ ກາຍເປັນແກ່ນສານຂອງພັກຢ່າງແທ້ຈິງໃຫ້ສົມກັບຄໍາຂວັນທີ່ວ່າ: "ຊາວໜຸ່ມເປັນແຂນຂວາຂອງພັກ ເປັນກະດູກສັນຫຼັງຂອງປະເທດຊາດ"; ສືບຕໍ່ສຸມໃສ່ກະກຽມເງື່ອນໄຂຕ່າງໆໃຫ້ແກ່ການດໍາເນີນກອງປະຊຸມໃຫຍ່ ຄັ້ງທີ VIII ຂອງຄະນະບໍລິຫານງານຊາວໜຸ່ມ ທຫລ ແລະ ກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ທຫລ ທີ່ຈະໄຂຂຶ້ນໃນຕໍ່ໜ້າໃຫ້ມີຜົນສໍາເລັດ ໂດຍສະເພາະນໍາພາສ້າງຂະບວນການຕ່າງໆໃຫ້ມີບັນຍາກາດທີ່ຟົດຟື້ນກວ່າເກົ່າ ແລະ ສ້າງໃຫ້ໄດ້ "ວຽກດີ ຄົນເດັ່ນ".

**# ຂ່າວ: ຣັດສະໝີ ດວງສັດຈະ**

**# ພາບ: ສົມອິກ ເຄນຄໍາແພງ**

# ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ